ສາມາດອອກຂ່າວໄດ້ທັນທີ

ຄມສ ເປີດຕົວ ຍຸດທະສາດ 10 ປີ ແລະ ແຜນປະຕິບັດງານ 5 ປີ ສະບັບໃໝ່ ເພື່ອສ້າງຄວາມສົມດູນ ລະຫວ່າງ ການພັດທະນາ ແລະ ການຄຸ້ມຄອງອ່າງນ້ຳ

ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 5 ເມສາ 2021 – ໃນວັນນີ້ ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ເປີດຕົວ ຍຸດທະສາດພັດທະນາອ່າງນ້ຳ 10 ປີ (BDS) ສະບັບໃໝ່ ສຳລັບ ອ່າງແມ່ນ້ຳຂອງ ແລະ ແຜນຍຸດທະສາດ 5 ປີ ຂອງ ຄມສ (MRC SP) ເພື່ອຊ່ວຍບັນດາປະເທດແມ່ນ້ຳຂອງ ໃຫ້ສາມາດແກ້ໄຂ ບັນຫາ ທ້າທາຍ ທີ່ເກີດຂຶ້ນໃໝ່ ໆ ແລະ ເພື່ອປັບປຸງ ສະຖານະການ ໂດຍລວມ ຂອງອ່າງນ້ຳແຫ່ງນີ້.

ຍຸດທະສາດພັດທະນາອ່າງນ້ຳ 2021–2030 ເຊິ່ງໄດ້ຮັບອະນຸມັດຈາກ ສະພາລັດຖະມົນຕີ ຈາກປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ ແມ່ນເນັ້ນໜັກໃສ່ 5 ຂົງເຂດບູລິມະສິດ ຄື: ປັບປຸງ ລະບົບນິເວດ ຂອງແມ່ນ້ຳຂອງ ເພື່ອສິ່ງແວດລ້ອມທີ່ອຸດົມສົມບູນ ແລະ ເພື່ອໃຫ້ຊຸມຊົນ ມີຄວາມສາມາດໃນ ການຜະລິດ; ປັບປຸງການເຂົ້າເຖິງ ແລະ ການນຳໃຊ້ ນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ເພື່ອຊີວິດການເປັນ ຢູ່ທີ່ດີຂອງຊຸມຊົນ; ການພັດທະນາຢ່າງຍືນຍົງ ເພື່ອການຂະຫຍາຍຕົວທາງເສດຖະກິດ ຢ່າງທົ່ວເຖິງ; ການ ປັບຕົວເຂົ້າກັບ ຄວາມສ່ຽງດ້ານ ສະພາບອາກາດ ແລະ ໄພພິບັດ; ແລະ ສົ່ງເສີມການຮ່ວມມືລະດັບພາກພື້ນ ຈາກທັດສະນະ ທີ່ກວມລວມທົ່ວທັງອ່າງນ້ຳ.

“ຍຸດທະສາດສະບັບນີ້ ແມ່ນສອດຄ່ອງກັບ ບູລິມະສິດ ແລະ ຄວາມຕ້ອງການ ຂອງບັນດາລັດຖະບານ ປະເທດ ແມ່ນ້ຳຂອງ ເພື່ອໃຫ້ອ່າງແມ່ນ້ຳຂອງແຫ່ງນີ້ ມີຄວາມເຂັ້ມແຂງ ແລະ ມີຄວາມສາມາດປັບຕົວໄດ້ຫຼາຍຂຶ້ນ ໂດຍ ການວາງແຜນໃນທ່າບຸກ ແລະ ການຄຸ້ມຄອງທີ່ມີການປະສານງານກັນ ແລະ ເພື່ອຮັບປະກັນຄວາມສົມດູນ ລະຫວ່າງ ການພັດທະນາເສດຖະກິດ ແລະ ການປົກປ້ອງສິ່ງແວດລ້ອມ,” ກ່າວໂດຍ ທ່ານ ດຣ. ອັນ ພິສ ຮັດ ດາ, ຫົວໜ້າກອງເລຂາ ຄມສ ໃນພິທີເປີດຕົວ ຍຸດທະສາດພັດທະນາອ່າງນ້ຳ ແລະ ແຜນຍຸດທະສາດ ຂອງ ຄມສ ຢ່າງເປັນທາງການ ໃນວັນຈັນນີ້. ງານເປີດຕົວດັ່ງກ່າວນີ້ ຍັງຈັດຂຶ້ນ ເພື່ອສະເຫຼີມສະຫຼອງ ວັນແມ່ນ້ຳ ຂອງ ເຊິ່ງເປັນວັນທີ່ ບັນດາປະເທດສະມາຊິກ ຄມສ ໄດ້ລົງນາມໃນ ສັນຍາແມ່ນ້ຳຂອງ ໃນວັນທີ 5 ເມສາ 1995.

ຍຸດທະສາດພັດທະນາອ່າງນ້ຳ ສະບັບໃໝ່ນີ້ ແມ່ນອີງຕາມ ການປະເມີນຜົນ ໃນຫວ່າງບໍ່ດົນມານີ້ ກ່ຽວກັບ ຜົນກະທົບຂະໜາດໃຫຍ່ ຈາກການພັດທະນານ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ແລະ ໂຄງລ່າງພື້ນຖານ ຕ່າງ ໆ ເຊິ່ງຮວມທັງ ເຂື່ອນຕ່າງ ໆ ທີ່ໄດ້ປ່ຽນຮູບການໄຫຼຂອງນ້ຳ, ກະທົບຕໍ່ກັບ ການເຄື່ອນຍ້າຍ ຂອງຕະກອນ ແລະ ເພີ້ມການເຊາະເຈື່ອນແຄມຝັ່ງ. ຜົນກະທົບເລົ່ານີ້ ໄດ້ເຮັດໃຫ້ ຈຳນວນປະຊາກອນປາ ຕາມທຳມະຊາດ ຫຼຸດລົງ, ອົງປະກອບດ້ານສິ່ງແວດລ້ອມ ແລະ ເຂດນ້ຳຖ້ວມເຖິງ ເຊື່ອມໂຊມລົງ, ແລະ ການ ສະສົມຕະກອນ ໃນເຂດສາມລ່ຽມປາກແມ່ນ້ຳຂອງ ຫຼຸດລົງ. ການປ່ຽນແປງດິນຟ້າອາກາດ ຍັງເຮັດໃຫ້ ຜົນ

ກະທົບຕ່າງ ໆ ເພີ້ມຄວາມຮຸນແຮງຂຶ້ນ, ພ້ອມທັງນຳເອົາ ຄວາມບໍ່ແນ່ນອນ ແລະ ຄວາມສ່ຽງ ເຂົ້າມາຫຼາຍຂຶ້ນ ເຊິ່ງຮວມທັງ ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ທີ່ເກີດຂຶ້ນ ຖີ່ຄັ້ງຂຶ້ນ.

ຍຸດທະສາດສະບັບນີ້ ຍັງໄດ້ກຳນົດ ມາດຕະການແນະນຳ ທີ່ພາກສ່ວນກ່ຽວຂ້ອງທັງໝົດ ໃນລະດັບປະເທດ ແລະ ໃນລະດັບພາກພື້ນ ສາມາດຈັດຕັ້ງປະຕິບັດ ເພື່ອບັນລຸ ບູລິມະສິດຍຸດທະສາດຕ່າງ ໆ ຂອງຍຸດທະສາດ ສະບັບນີ້ ເຊິ່ງຮວມທັງ ການຈັດຕັ້ງປະຕິບັດ ມາດຕະການເລົ່ານັ້ນ ໃນວຽກງານ ແລະ ແຜນງານຂອງພວກເຂົາ ເອງ.

ຄມສ ຈະປະກອບສວນສຳຄັນ ໃຫ້ການຈັດຕັ້ງປະຕິບັດ ບູລິມະສິດຍຸດທະສາດຕ່າງ ໆ ຂອງ ຍຸດທະສາດ ພັດທະນາອ່າງນ້ຳ ສະບັບນີ້ ຜ່ານທາງ ແຜນຍຸດທະສາດ 2021–2025 ຂອງ ຄມສ ເຊິ່ງປະກອບດ້ວຍ 95 ວຽກ ງານ ແລະ 86 ຄາດໝາຍຜົນໄດ້ຮັບ. ທິດທາງສຳຄັນໃໝ່ ສຳລັບວຽກງານຂອງ ຄມສ ຈະແມ່ນການ ປະເມີນ ແລະ ລະບຸເຖິງ ທາງເລືອກໃໝ່ ໆ ໃນການກັກເກັບນ້ຳ, ຂອບເຂດໃໝ່ ສຳລັບ ປະລິມານນ້ຳໄຫຼ ແລະ ຂອບ ເຂດໃໝ່ດ້ານສິ່ງແວດລ້ອມ, ແລະ ໃຫ້ຄຳແນະນຳກ່ຽວກັບ ໂຄງການຮ່ວມລົງທຶນທົ່ວທັງອ່າງນ້ຳ ເຊິ່ງຈະເກີດ ຜົນປະໂຫຍດຫຼາຍດ້ານ ສຳລັບ ການຄຸ້ມຄອງໄພນ້ຳຖ້ວມ, ການຫຼຸດຜ່ອນໄພແຫ້ງແລ້ງ, ຄວາມໝັ້ນຄົງດ້ານ ພະລັງງານ ແລະ ການປົກປ້ອງສິ່ງແວດລ້ອມ.

ນອກຈາກນັ້ນແລ້ວ, ກໍ່ຍັງຈະໄດ້ດຳເນີນວຽກງານຕ່າງ ໆ ເພື່ອຮັບປະກັນວ່າ ແຜນການຜະລິດພະລັງງານ ສະບັບໃໝ່ ໆ ຕ້ອງພິຈາລະນາເຖິງ ຫຼາກຫຼາຍແຫຼ່ງສຳລັບການຜະລິດ ທີ່ມີຢູ່ຕະຫຼອດໄປ ເຊິ່ງຮວມທັງ ການ ເຊື່ອມສານ ທາງເລືອກລະຫວ່າງ ນ້ຳ-ພະລັງງານ ແລະ ການນຳໃຊ້ ພະລັງງານລົມ ແລະ ພະລັງງານແສງຕາ ເວັນ ເພີ້ມຕື່ມ. ມາດຕະການເລົ່ານີ້ ຈະເພີ້ມຄວາມຍືນຍົງ ແລະ ແກ້ໄຂຄວາມສ່ຽງຕໍ່ສະພາບອາກາດ ທີ່ອາດຈະ ເກີດຂຶ້ນໄດ້.

ຄມສ ຍັງຈະສຶກສາວິທີການ ເຮັດແນວໃດເພື່ອໃຫ້ ການປະຕິບັດງານຂອງ ບັນດາໂຄງລ່າງພື້ນຖານທາງນ້ຳ ໃນທົ່ວທັງອ່າງນ້ຳແຫ່ງນີ້ ສາມາດປະສານງານກັນໄດ້ ເພື່ອສົ່ງເສີມຜົນປະໂຫຍດ ຈາກການປະຕິບັດງານ ເລົ່ານັ້ນ ແລະ ເພື່ອຈຳກັດຜົນກະທົບຮຸນແຮງ ຕໍ່ກັບສິ່ງແວດລ້ອມຂອງ ລຳແມ່ນ້ຳຂອງ. ຄະນະກຳມາທິການນີ້ ຈະສືບຕໍ່ຮ່ວມວຽກງານ ຢ່າງກວ້າງຂວາງກັບ ພາກສ່ວນກ່ຽວຂ້ອງ ແລະ ກົນໄກຕ່າງ ໆ ທີ່ກ່ຽວຂ້ອງກັບແມ່ນ້ຳ ຂອງ ໂດຍສະເພາະແມ່ນ ອົງການຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ກ່ຽວກັບຊັບພະຍາກອນນ້ຳ ເພື່ອ ຮັບປະກັນດ້ານ ການແຈ້ງໃຫ້ຮູ້ທັນເວລາ, ການປະສານງານ ແລະ ການສະໜັບສະໜູນ ເພື່ອການປັບຕົວເຂົ້າ ກັບ ແມ່ນ້ຳທີ່ກຳລັງປ່ຽນແປງໄປ.

ຈາກແຜນຍຸດທະສາດຂອງ ຄມສ ສະບັບໃໝ່ນີ້, ຄມສ ຄາດວ່າຈະລົງທຶນຫຼາຍກວ່າ 60,5 ລ້ານໂດລາ ສະຫະລັດ ພາຍໃນໄລຍະເວລາ 5 ປີຕໍ່ໄປນີ້ ເຊິ່ງໃນນັ້ນ ທຶນປະມານ 40 ສ່ວນຮ້ອຍ ຈະມາຈາກ ບັນດາ ປະເທດສະມາຊິກຂອງ ຄມສ. ຄຽງຄູ່ໄປກັບ ແຫຼ່ງການເງິນທີ່ຈຳເປັນ ແລະ ເພື່ອບັນລຸເປົ້າໝາຍຂອງ ແຜນຍຸດ ທະສາດ ຂອງ ຄມສ ນັ້ນ, ມັນຈະຮຽກຮ້ອງເຖິງ ການນຳພາທີ່ດີ ຈາກຫ່ວຍງານຕ່າງ ໆ ຂອງ ຄມສ ແລະ ການ ຮ່ວມມື ແລະ ການສະໜັບສະໜູນ ຢ່າງຈິງຈັງ ຈາກບັນດາຄູ່ຮ່ວມງານ ແລະ ພາກສ່ວນກ່ຽວຂ້ອງຕ່າງ ໆ .

ແຜນຍຸດທະສາດຂອງ ຄມສ ສະບັບຕໍ່ໄປ ຈະຂຽນຂຶ້ນມາໃນປີ 2024 ເພື່ອປະກອບສ່ວນໃຫ້ ເວລາສ່ວນທີ່ເຫຼືອ ຂອງ ຍຸດທະສາດພັດທະນາອ່າງນ້ຳ ສຳລັບປີ 2026–2030.

ยຸດທະສາດພັດທະນາອ່າງນ້ຳ ແລະ ແຜນຍຸດທະສາດຂອງ ຄມສ ແມ່ນສານຕໍ່ມາຈາກ ບົດສຶກສາລະອຽດ ກ່ຽວກັບ ສະຖານະການຂອງ ອ່າງແມ່ນ້ຳຂອງ ເຊິ່ງຮວມທັງ ບັນຫາທ້າທາຍ ແລະ ໂອກາດຂອງການ ພັດທະນາ, ບົດຮຽນທີ່ຖອດຖອນໄດ້ ຈາກຍຸດທະສາດຜ່ານ ໆ ມາ ແລະ ການປຶກສາຫາລື ຢ່າງກວ້າງຂວາງ ກັບບັນດາປະເທດແມ່ນ້ຳຂອງ ທັງ 6 ປະເທດ, ຄູ່ຮ່ວມພັດທະນາ, ລັດຖະບານປະເທດຕ່າງ ໆ ໃນພາກພື້ນນີ້, ອົງການຈັດຕັ້ງສັງຄົມ, ຂະແໜງການເອກະຊົນ ແລະ ພາກສ່ວນປະຕິບັດງານ ຈາກຫ້ອງການປົກຄອງອື່ນ ໆ.

ນັບຕັ້ງແຕ່ ການສ້າງຕັ້ງ ຄມສ ໃນປີ 1995, ຄມສ ໄດ້ສ້າງ ແຜນຍຸດທະສາດຂອງ ຄມສ 5 ສະບັບ ແລະ ຍຸດທະ ສາດພັດທະນາອ່າງແມ່ນ້ຳ 3 ສະບັບ ເຊິ່ງວ່າ ແຕ່ລະສະບັບນັ້ນ ມີກຳນົດເວລາ 5 ປີ. ການປ່ຽນກຳນົດເວລາມາ ເປັນ 10 ປີ ສຳລັບ ຍຸດທະສາດພັດທະນາອ່າງນ້ຳນັ້ນ ແມ່ນມີປັດໄຈຂັບເຄື່ອນມາຈາກ ຄວາມຈຳເປັນ ໃນການ ເຮັດໃຫ້ມັນ ສອດຄ່ອງກັບ ເປົ້າໝາຍພັດທະນາຢ່າງຍືນຍົງ ແລະ ຄວາມຈຳເປັນ ໃນການພັດທະນາອ່າງນ້ຳ ຢ່າງຍືນຍົງ ແລະ ປະເດັນໃນປະຈຸບັນ ກ່ຽວກັບ ຄວາມໝັ້ນຄົງຂອງນ້ຳ ເຊິ່ງຈະສາມາດແກ້ໄຂໄດ້ ໃນລະດັບ ອ່າງນ້ຳເທົ່ານັ້ນ ໂດຍການຮ່ວມມືລະຫວ່າງ ບັນດາປະເທດຝັ່ງນ້ຳ ທັງໝົດ 6 ປະເທດ ແລະ ຊຸມຊົນຕ່າງ ໆ ທີ່ ອາໃສຢູ່ໃນພາກພື້ນແມ່ນ້ຳຂອງ.

ຍຸດທະສາດພັດທະນາອ່າງນ້ຳ ສະບັບນີ້ ຈະບັນລຸຜົນໄດ້ ພຽງແຕ່ຖ້າວ່າ ພາກສ່ວນປະຕິບັດງານ ທັງໝົດທີ່ ກ່ຽວຂ້ອງ ເຮັດວຽກຮ່ວມກັນ ເພື່ອໃຫ້ອ່າງແມ່ນ້ຳຂອງ ຈະເລີນຮຸ່ງເຮືອງທາງເສດຖະກິດ, ຍຸຕິທຳຕໍ່ສັງຄົມ, ດີຕໍ່ ສິ່ງແວດລ້ອມ ແລະ ສາມາດປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດໄດ້.

ຂໍ້ມູນສຳລັບບັນນາທິການຂ່າວ:

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອ ການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

- ຈົບ -

ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:
ທ່ານ ໂສພຽກ ແມ
ພະນັກງານປະຊາສຳພັນ
ອີເມວ: sopheak@mrcmekong.org
ໂທລະສັບມືຖື/ວັອດແອັບ: +856-20-77779168

###